ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 0808/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 18/03/2025

ໃບລາຍງານ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດຕະຫຼາດຫຼັກຊັບລາວ ຈຳກັດ ທີ່ນັບຖື

ເລື່ອງ: ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 1/2025

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 27/ຄຄຊ, ລົງ ວັນທີ 29 ມີນາ 2022.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/LSX, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມ ສະພາບໍລິຫານສະໄໝສາມັນ ຄັ້ງທີ 1/2025, ວັນທີ 17 ມີນາ 2025, ມີລາຍລະອຽດລຸ່ມນີ້:

1. ອະນຸມັດບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ລວມທັງບົດລາຍງານການເງິນຂອງບໍລິສັດ ປີ 2024 ແລະ ໃຫ້ນຳເລື່ອງນີ້ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024 ເພື່ອພິຈາລະນາຮັບຮອງ.
2. ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2024 ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ ໃນປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນ ໃນການໄດ້ຮັບເງິນປັນຜົນ ໃນວັນທີ **28 ເມສາ 2025** ໃນອັດຕາ **30** ກີບຕໍ່ຮຸ້ນ, ລວມເປັນເງິນປັນຜົນທັງໝົດທີ່ຕ້ອງຈ່າຍ **50,38** ຕື້ກີບ ແລະ ກຳນົດວັນຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ ໃນວັນທີ **27 ພຶດສະພາ 2025**. ແລະ ໃຫ້ນຳເລື່ອງນີ້ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024 ເພື່ອ ພິຈາລະນາຮັບຮອງ.
3. ຮັບຮອງການແຕ່ງຕັ້ງກຳມະການສະພາບໍລິຫານບາງທ່ານ ທີ່ຄົບອາຍຸການ, ການກຳນົດຜູ້ທີ່ມີອຳນາດລົງລາຍເຊັນຜູກພັນ ບໍລິສັດ ແລະ ການກຳນົດອາຍຸຂອງບັນດາກຳມະການສະພາບໍລິຫານບໍລິສັດ; ດັ່ງມີລາຍຊື່ລຸ່ມນີ້:

    1) ແຕ່ງຕັ້ງທ່ານ ສຸລິວັດ ສຸວັນນະຈຸມຄຳ ຮອງລັດຖະມົນຕີ ກະຊວງການເງິນ ເປັນປະທານສະພາບໍລິຫານ ສືບຕໍ່ອີກວາລະໜຶ່ງ,
    2) ແຕ່ງຕັ້ງທ່ານ ປະສົມເພັດ ຄຳຕັນ ຮອງຫົວໜ້າກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ປະກັນໄພ ກະຊວງການເງິນ ເປັນກຳມະການສະພາບໍລິຫານ ສືບຕໍ່ອີກວາລະໜຶ່ງ.

    ກຳນົດຜູ້ມີອຳນາດໃນການລົງລາຍເຊັນສັນຍາຜູກພັນບໍລິສັດດັ່ງນີ້:

    ກ. ໃຫ້ປະທານສະພາບໍລິຫານ, ຮອງປະທານສະພາບໍລິຫານ ຫລື ຜູ້ອຳນວຍການໃຫຍ່ ເປັນຜູ້ມີອຳນາດ ໃນການລົງລາຍເຊັນຜູກພັນບໍລິສັດ ປະທັບກາບໍລິສັດແຕ່ຝ່ຽງຜູ້ດຽວ ຫລື;
    ຂ. ໃຫ້ກຳມະການທ່ານອື່ນ ສອງທ່ານລົງລາຍເຊັນຮ່ວມກັນ ແລະ ປະທັບກາບໍລິສັດ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ. ນ. 2392
ໂທລະສັບ: (856-21) 316 142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ແລະ ກຳນົດອາຍຸການຂອງກຳມະການສະພາບໍລິຫານທັງໝົດບໍ່ເກີນສອງປີ ໂດຍເລີ່ມນັບແຕ່ມື້ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ເປັນຕົ້ນໄປ ແລະ ໃຫ້ນຳເລື່ອງນີ້ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024 ເພື່ອພິຈາລະນາ.

4. ກຳນົດວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024, ມີລາຍລະອຽດດັ່ງນີ້:

1) ວາລະກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ມີດັ່ງນີ້:

ວາລະທີ 1: ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນຄັ້ງຜ່ານມາ.

ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມ ວິສາມັນຜູ້ຖືຮຸ້ນ ຄັ້ງທີ 01/2025.

ວາລະທີ 3: ພິຈາລະນາ ແລະ ອະນຸມັດລາຍງານການເງິນ 6 ເດືອນຕົ້ນປີ 2024 ແລະ ການອະນຸມັດບ່ຈ່າຍເງິນປັນຜົນ ຈາກການດຳເນີນທຸລະກິດ 06 ເດືອນຕົ້ນປີ 2024 ແລະ ເລື່ອງເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2024.

ວາລະທີ 4: ພິຈາລະນາ ແລະ ອະນຸມັດບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2024 ລວມທັງລາຍ ງານການເງິນຂອງບໍລິສັດ ປີ 2024.

ວາລະທີ 5: ພິຈາລະນາ ແລະ ອະນຸມັດແຜນການດຳເນີນທຸລະກິດຂອງບໍລິສັດປີ 2025.

ວາລະທີ 6: ພິຈາລະນາ ແລະ ອະນຸມັດການຄັດເລືອກ ແລະ ກຳນົດຄ່າວ່າຈ້າງຜູ້ກວດສອບພາຍນອກ ສຳລັບປີ 2026-2028.

ວາລະທີ 7: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງກຳມະການສະພາບໍລິຫານບາງທ່ານ ທີ່ຄົບອາຍຸການ ແລະ ການກຳ ນົດຜູ້ທີ່ມີອຳນາດລົງລາຍເຊັນຜູກພັນບໍລິສັດ ແລະ ອາຍຸການຂອງກຳມະການສະພາບໍລິຫານ.

ວາລະທີ 8: ພິຈາລະນາ ແລະ ອະນຸມັດການເພີ່ມຕື່ອຄູນດັດສະນີເງິນເດືອນພື້ນຖານ ຂອງພະນັກງານບໍລິສັດ.

2) ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນ ການກຳນົດລາຍລະອຽດ ແລະ ເງື່ອນໄຂຕ່າງໆທີ່ຈຳເປັນກ່ຽວກັບການກະກຽມເປີດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ໄດ້ທຸກປະການ, ລວມທັງໃຫ້ມີອຳນາດໃນການດຳເນີນການໃດໜຶ່ງອັນຈຳເປັນ ລວມທັງການ ກະກຽມເອກະສານຕ່າງໆ ແລະ ດຳເນີນການໃຫ້ຖືກຕ້ອງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ; ແລະ

3) ກຳນົດຜູ້ຕາງໜ້າຜູ້ຖືຮຸ້ນໃນການຮັບໃບມອບສັນທະຄຶ: ແຕ່ງຕັ້ງ ທ່ານ ຄຳມູນ ວິພົງໄຊ, ທ່ານ ຄຳແກ້ວ ວິສີ ສົມບັດ, ແລະ ທ່ານ ປອ. ພັນປະກິດ ອ່ອນພັນດາລາ ກຳມະການອິດສະຫຼະ ເປັນຜູ້ມອບຮັບສັນທະຈາກຜູ້ຖືຮຸ້ນ.

ດັ່ງນັ້ນ ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະໃຊ້ຕາງລາຍງານ.

ຮຽນມາດ້ວຍຄວາມນັບຖື,

ປະທານສະພາບໍລິຫານ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ສຸລິວັດ ສຸວັນນະຈູມຄຳ